ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ ເລກທີ 398 /ສທ

ນະຄອນຫຼວງວຽງຈັນ, ວັນທີ 06 APR 2022

**ໜັງສືສະເໜີ**

**ຮຽນ: ທ່ານ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ທີ່ນັບຖື.**

**ເລື່ອງ: ຂໍອະນຸມັດຮັບເອົາ ໂຄງການຮ່ວມມືດ້ານການຄວບຄຸມ ພະຍາດໃບໄມ້ໃນຕັບ ແລະ ພະຍາດໃບໄມ້ໃນເລືອດ ລະຫວ່າງ ພະແນກສາທາລະນະສຸກແຂວງ[redacted] ແລະ ມະຫາວິທະຍາໄລ[redacted]ປະເທດຍີ່ປຸ່ນ ພາຍໃຕ້ໂຄງການ JICA Partnership Program.**

- ອີງຕາມ ໜັງສືສະເໜີຂອງມະຫາວິທະຍາໄລ[redacted]ປະເທດຍີ່ປຸ່ນ, ສະບັບລົງວັນທີ 23 ມີນາ 2022.
- ອີງຕາມ ໜັງສືຂອງກະຊວງການຕ່າງປະເທດ, ສະບັບເລກທີ 740/ຫກ.ອປອ, ລົງວັນທີ 14 ມີນາ 2022.
- ອີງຕາມ ໜັງສືຂອງກົມຄວບຄຸມພະຍາດຕິດຕໍ່, ສະບັບເລກທີ 151/ກຄພຕ, ລົງວັນທີ 18 ກຸມພາ 2022.
- ອີງຕາມ ໜັງສືຂອງສູນໄຂ້ຍຸງ, ແມ່ກາຝາກ ແລະ ແມງໄມ້, ສະບັບເລກທີ 108/ສຂມມ, ວັນທີ 16 ກຸມພາ 2022.
- ອີງຕາມ ໜັງສືຂອງສະຖາບັນສາທາລະນະສຸກສາດ ແລະ ການແພດເຂດຮ້ອນ, ສະບັບເລກທີ 57/ສສກ, ລົງວັນທີ 14 ກຸມພາ 2022.
- ອີງຕາມ ໜັງສືສະເໜີຂອງພະແນກສາທາລະນະສຸກແຂວງ[redacted], ສະບັບເລກທີ 0102/ສທຂ.ຈຂ, ລົງວັນທີ 28 ມັງກອນ 2022.

ກະຊວງສາທາລະນະສຸກ ຂໍຖືເປັນກຽດຮຽນສະເໜີມາຍັງທ່ານ ເພື່ອຂໍອະນຸມັດຮັບເອົາ **"ໂຄງການຮ່ວມມືດ້ານການຄວບຄຸມ ພະຍາດໃບໄມ້ໃນຕັບ ແລະ ພະຍາດໃບໄມ້ໃນເລືອດ"** ລະຫວ່າງ ພະແນກສາທາລະນະສຸກແຂວງ[redacted] ແລະ ມະຫາວິທະຍາໄລ [redacted] ປະເທດຍີ່ປຸ່ນ. ຈຸດປະສົງຂອງໂຄງການ ແມ່ນເພື່ອເພີ່ມທະວີຄວາມເຂັ້ມແຂງ, ອຳນວຍຄວາມສະດວກ ແລະ ສົ່ງເສີມການຮ່ວມມືທາງດ້ານສຸຂະພາບ/ສາທາລະນະສຸກ. ໄລຍະເວລາໂຄງການ ແມ່ນມີກຳນົດ 02 ປີ ນັບຕັ້ງແຕ່ມື້ໄດ້ຮັບການອະນຸມັດເປັນຕົ້ນໄປ. ທີ່ຕັ້ງໂຄງການ ແມ່ນຢູ່ 02 ບ້ານ (ບ້ານ[redacted]ແລະ ບ້ານ[redacted]) ເມືອງ[redacted] ແຂວງຈຳປາສັກ. ງົບປະມານໂຄງການ [redacted]ເຢັນ, ພາຍໃຕ້ໂຄງການ JICA Partnership Program (ສຳລັບລາຍລະອຽດແມ່ນຄັດຕິດມາພ້ອມນີ້).

ຜ່ານການຄົ້ນຄວ້າທາງດ້ານວິຊາການ, ກະຊວງສາທາລະນະສຸກ ເຫັນວ່າ ໂຄງການດັ່ງກ່າວແມ່ນເປັນປະໂຫຍດທາງດ້ານວິຊາການ, ໂດຍສະເພາະໃນວຽກງານກັນພະຍາດ ແລະ ຄວບຄຸມພະຍາດຕິດຕໍ່ ແລະ ການຮັບເອົາໂຄງການດັ່ງກ່າວ ແມ່ນມີຄວາມສຳຄັນໃນການປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາສາທາລະນະສຸກ 5 ປີ ຄັ້ງທີ IX ແລະ ຍຸດທະສາດປະຕິຮູບສາທາລະນະສຸກ ໄລຍະ III (2021 - 2025) ໃນແຜນງານກັນພະຍາດໃຫ້ບັນລຸຕາມເປົ້າໝາຍ.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອພິຈາລະນາຕາມລະບຽບການດ້ວຍ.

**ລັດຖະມົນຕີ**

[redacted]